ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1314/ກປ.

ນະຄອນຫຼວງວຽງຈັນ, ວັນທີ 30 JAN 2023

# ຄຳສັ່ງ
## ວ່າດ້ວຍການຫ້າມນຳໃຊ້ ຜະລິດຕະພັນສຳຮອງຈາກສັດເປັນສ່ວນປະກອບຂອງອາຫານສັດຄ້ຽວເອື້ອງ

**ເຖິງ: - ຫ້ອງການ, ບັນດາກົມ, ສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;**
**- ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.**

- ອີງຕາມ ກົດໝາຍ ວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ສັນຍາ ການກັກກັນ ແລະ ມາດຕະຖານດ້ານສຸຂະພາບ ສຳລັບສັດໃຫຍ່ ທີ່ຈະສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ ລົງວັນທີ 29 ພະຈິກ 2022;
- ອີງຕາມ ໜັງສືສະເໜີຂອງກົມລ້ຽງສັດ ແລະ ການປະມົງ ເລກທີ 0064/ກລປ, ລົງວັນທີ 16 ມັງກອນ 2022;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້, ລົງວັນທີ 18 ມັງກອນ 2023.

ກະຊວງກະສິກຳ ແລະ ປ່າໄມ້ ຂໍແຈ້ງມາຍັງທ່ານ ຊາບວ່າ: ພະຍາດງົວບ້າ (Mad cow disease ຫຼື Bovine Spongiform Encephalopathy, BSE) ແມ່ນພະຍາດງົວ ທີ່ອີງການສຸຂະພາບສັດສາກົນ ໃຫ້ຄວາມສຳຄັນ ຊຶ່ງສະແດງອາການທາງປະສາດ ທີ່ໜ້າຢ້ານກົວ, ສາມາດຕິດຕໍ່ ໃສ່ສັດຄ້ຽວເອື້ອງ ລວມທັງຄົນເຮົາ ແລະ ມີການລາຍງານການເກີດພະຍາດ ຢູ່ໃນໂລກ ຫຼາຍກວ່າ 25 ປະເທດ ເປັນຕົ້ນ ບັນດາປະເທດໃນທະວີບເອີຣົບ, ເຂດອາຊີຕາເວັນອອກກາງ ແລະ ອາເມລິກາເໜືອ. ພະຍາດນີ້ແມ່ນເກີດຈາກສານໂປຼຕີນຜິດປົກກະຕິ (prion) ທີ່ມີຜົນກະທົບໂດຍກົງ ຕໍ່ສະໝອງຂອງງົວ ແລະ ມີຄວາມສ່ຽງຕິດໃສ່ຄົນທີ່ບໍລິໂພກຊີ້ນງົວທີ່ເປັນພະຍາດດັ່ງກ່າວ. ສານຜິດປົກກະຕິນີ້ ມີຄວາມທົນທານຕໍ່ຄວາມຮ້ອນ, ແສງອຸລຕຣາໄວໂອເລັດ, ຢາຂ້າເຊື້ອ ແລະ ມີໄລຍະຟັກເຊື້ອ ແຕ່ 2 ຫາ 8 ປີ. ການຕິດຕໍ່ ລະຫວ່າງສັດ ສູ່ ສັດ ແລະ ລະຫວ່າງ ສັດ ສູ່ ຄົນ ແມ່ນສາມາດເກີດຈາກການບໍລິໂພກເນື້ອເຍື່ອຂອງສັດຄ້ຽວເອື້ອງ ທີ່ມີການປົນເປື້ອນສານໂປຼຕີນດັ່ງກ່າວ.

ສະນັ້ນ, ເພື່ອເປັນການ ປ້ອງກັນ ແລະ ສະກັດກັ້ນ ບໍ່ໃຫ້ ພະຍາດງົວບ້າ ຫຼື ມີສານໂປຼຕີນຜິດປົກກະຕິ (prion) ນີ້ ເກີດຂຶ້ນ ແລະ ແຜ່ກະຈາຍ ຢູ່ ສປປ ລາວ. ບ.ສ

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ບັນດາກົມ, ສະຖາບັນທີ່ກ່ຽວຂ້ອງ, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໂຄສະນາເຜີຍແຜ່ ເພື່ອໃຫ້ການຈັດຕັ້ງ ທັງພາກລັດ, ຊາວກະສິກອນ ແລະ ຜູ້ປະກອບການໃນຂອບເຂດທົ່ວປະເທດ ຊາບ ກ່ຽວກັບ ຄວາມສ່ຽງ ແລະ ຄວາມເປັນອັນຕະລາຍຂອງພະຍາດງົວບ້າ ແນໃສ່ໃຫ້ທຸກພາກສ່ວນ ເຂົ້າຮ່ວມ ໃນການເຝົ້າລະວັງ ຕິດຕາມ, ລາຍງານ ແລະ ສະກັດກັ້ນພະຍາດດັ່ງກ່າວ ຢ່າງເຂັ້ມງວດ;

2. ໃຫ້ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການປະສານ ສົມທົບ ກັບພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ດຳເນີນ ການເກືອດຫ້າມ, ການນຳໃຊ້ ຜະລິດຕະພັນສຳຮອງຈາກສັດ ປະເພດຊີ້ນ, ກະດູກປົ່ນ ແລະ ຊິ້ນສ່ວນອື່ນ ທີ່ໄດ້ມາຈາກສັດ ເປັນສ່ວນປະກອບ ຂອງອາຫານສັດຄ້ຽວເອື້ອງ;

3. ໃຫ້ດ່ານກວດກາສັດຕະວະແພດສາກົນ ແຈ້ງ ໃຫ້ຜູ້ນຳເຂົ້າ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຊາບ ກ່ຽວກັບການຫ້າມ ນຳເຂົ້າອາຫານສັດຄ້ຽວເອື້ອງທີ່ມີສ່ວນປະກອບຂອງຜະລິດຕະພັນສຳຮອງຈາກສັດ ຈາກຕ່າງປະເທດ ເຂົ້າມາຍັງ ສປປ ລາວ, ຖ້າພົບເຫັນ ການລະເມີດ ໃຫ້ດຳເນີນມາດຕະການ ກັກ, ຮຽກຮ້ອງໃຫ້ສົ່ງກັບຄືນ ຫຼື ທຳລາຍ ຕາມລະບຽບການຢ່າງເຂັ້ມງວດ;

4. ໃຫ້ກົມລ້ຽງສັດ ແລະ ການປະມົງ ເພີ່ມທະວີ ໃນການຕິດຕາມ ແລະ ກວດກາ ຄຸນນະພາບ ຂອງອາຫານສັດຄ້ຽວເອື້ອງ ຫາກພົບເຫັນມີການຜະລິດ ແລະ ນຳໃຊ້ອາຫານສັດຄ້ຽວເອື້ອງ ທີ່ມີສ່ວນປະກອບຂອງຜະລິດຕະພັນສຳຮອງຈາກສັດ ໃຫ້ດຳເນີນມາດຕະການສຶກສາອົບຮົມ, ຮຽກເກັບຄືນ, ແກ້ໄຂ ຫຼື ແນະນຳ ໃຫ້ເອົາອາຫານສັດທີ່ມີສ່ວນປະກອບດັ່ງກ່າວ ໄປນຳໃຊ້ກັບສັດຊະນິດອື່ນຕາມຄວາມເໝາະສົມ;

5. ໃຫ້ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນເຈົ້າການ ຄົ້ນຄວ້າ ສູດອາຫານສັດຄ້ຽວເອື້ອງທີ່ເໝາະສົມ ທີ່ບໍ່ມີສ່ວນປະກອບຂອງຜະລິດຕະພັນສຳຮອງຈາກສັດເພື່ອທົດແທນສູດອາຫານສັດຄ້ຽວເອື້ອງ;

6. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ທັງ ສູນກາງ ແລະ ທ້ອງຖິ່ນ ຮີບຮ້ອນປະສານສົມທົບຊຶ່ງກັນ ແລະ ກັນ ເພື່ອຈັດຕັ້ງຜັນຂະຫຍາຍ ຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ, ພ້ອມທັງມີການສະຫຼຸບລາຍງານ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;

7. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ໒.໑໒

**ລັດຖະມົນຕີ**

ປອ. ເພັດ ພົມພີພັກ

**ບ່ອນນຳສົ່ງ:**

| | | |
|---|---|---|
| 1. ທ່ານ ລມຕ, ຮລມຕ | ທ່ານລະ | 01 ສະບັບ |
| 2. ຫ້ອງການກະຊວງ ກປ | | 01 ສະບັບ |
| 3. ບັນດາກົມ ແລະ ສະຖາບັນ, | ພາກສ່ວນລະ | 01 ສະບັບ |
| 4. ກົມລ້ຽງສັດ ແລະ ການປະມົງ | | 01 ສະບັບ |
| 5. ພະແນກ ກປ ຂັ້ນແຂວງ, | ພາກສ່ວນລະ | 01 ສະບັບ |
| 6. ເກັບມ້ຽນ | | 01 ສະບັບ |